ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 204 /ບທວລ
ນະຄອນຫຼວງວຽງຈັນ, ວັນທີ 28 OCT 2025

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິຂອງກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 2 ປີ 2025 (ເພີ່ມເຕີມ).

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບເລກທີ 15/ສສຄ ລົງວັນທີ 11 ທັນວາ ປີ 2024.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.
- ອີງຕາມ ມະຕິກອງປະຊຸມສະພາບໍລິຫານຄັ້ງທີ 2 ປີ 2025 ສະບັບເລກທີ 200 ຄັ້ງວັນທີ 24/10/2025.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 02 ປີ 2025 ເຊິ່ງຈັດຂຶ້ນໃນວັນທີ 24 ຕຸລາ 2025 ເວລາ 09:00 ໂມງ, ຢູ່ສຳນັກງານກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ກຳນົດເອົາວັນທີ 12 ພະຈິກ 2025 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອການົດສິດຂອງຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2025. ກອງປະຊຸມຜູ້ຖືຮຸ້ນວິສາມັນ ດັ່ງກ່າວ ຈະຈັດຂຶ້ນໃນວັນທີ 23 ທັນວາ 2025 ເວລາ 9:00 ໂມງ, ສະຖານທີ່ ຫ້ອງປະຊຸມຊັ້ນ 4 ບໍລິສັດລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ບໍລິການ ແລະການຄ້າຂາອອກ-ຂາເຂົ້າ (ພກອ).
2. ຮັບຮອງ ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປີ 2025 ຂອງກຸ່ມ ບທວລ:
   1) ພິຈາລະນາ ແລະ ຮັບຮອງ ການສະເໜີສືບຕໍ່ຮັກສາຖານະເປັນບໍລິສັດຈົດທະບຽນໃນຕະຫຼາດ ຫຼັກຊັບລາວ.
   2) ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດ ໃນປີ 2026-2028 ຂອງກຸ່ມ ບທວລ
   3) ພິຈາລະນາ ແລະ ຮັບຮອງ ບົດລາຍງານສະພາບວຽກງານການສະສາງຊັບສິມບັດ
   4) ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງຮ່າງການຈັດຕັ້ງ
   5) ພິຈາລະນາ ແລະ ຮັບຮອງການປັບປຸງໜ້າທີ່ຄວາມຮັບຜິດຊອບຂອງຜູ້ບໍລິຫານຂັ້ນສູງ
   6) ພິຈາລະນາ ແລະ ຮັບຮອງ ການປ່ຽນຜູ້ອຳນວຍການໃຫ່ຍ

ບ້ານໂພນພະເນົາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ
Phonphanao Village, Saysettha District, Vientiane Capital, Lao PDR
Tel: (856-21) 451116, 451222, Facebook: Lao Culture Tourism Public Group Company

7) ພິຈາລະນາ ແລະ ຮັບຮອງ ການປ່ຽນສະມາຊິກສະພາບໍລິຫານ

ອາລະດັ່ງກ່າວຂໍສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025 ເພື່ອພິຈາລະນາ ແລະຮັບຮອງຕໍ່ໄປ.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ

ປະທານສະພາບໍລິຫານບໍລິສັດ

ເນ້ຍເຫຼ້ຍ